ເລກທີ 003 /ບທວລ

ນະຄອນຫຼວງວຽງຈັນ, ວັນທີ 15 JAN 2025

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານ ຜູ້ອຳນວຍການໃຫຍ່ ຂອງຕະຫຼາດຫຼັກຊັບລາວ,
ທ່ານ ຜູ້ຖືຮຸ້ນຂອງບໍລິສັດ ກຸ່ມທ່ອງທ່ຽວວັດທະນະທຳລາວ ມະຫາຊົນ

ເລື່ອງ: ລາຍງານກ່ຽວກັບຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດ ຂອງບໍລິສັດ ປະຈຳໄຕມາດ 4 ປີ 2024.

- ຂໍ້ຕົກລົງວ່າດ້ວຍການຮັບຮອງບົດແຜນການປັບປຸງ ແລະ ຟື້ນຟູກິດຈະການຂອງບໍລິສັດຊິມັງ ລາວ ມະຫາຊົນ ສະບັບເລກທີ 1958/ກປທ, ລົງວັນທີ 21/4/2022.
- ອີງຕາມແຜນການປັບປຸງ ແລະ ຟື້ນຟູທຸລະກິດຂອງບໍລິສັດ ສະບັບລົງວັນທີ 30/12/2021

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ (ບທວລ) ຂໍຖືເປັນກຽດລາຍງານມາຍັງ ທ່ານເພື່ອຊາບກ່ຽວກັບ ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນປັບປຸງ ແລະ ຟື້ນຟູທຸລະກິດຂອງ ບໍລິສັດ ນັບແຕ່ບໍລິສັດໄດ້ ເຂົ້າສູ່ຂະບວນການຟື້ນກິດຈະການ ເຊິ່ງມີລາຍລະອຽດ ດັ່ງນີ້:

1. ສຳລັບວຽກງານການຊື້ຮຸ້ນຂອງບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ ແລະ ຜູ້ຖືຮຸ້ນລາຍຍ່ອຍ ຍັງບໍ່ທັນສຳເລັດເນື່ອງຈາກວ່າເງິນທຶນຍັງບໍ່ທັນມີຄາດວ່າຈະສຳເລັດພາຍໃນທ້າຍ 2025.
2. ສຳລັບໂຄງການກໍ່ສ້າງຕຶກສຳນັກງານ ບໍລິສັດ ໄດ້ສຳເລັດໂຄງສ້າງຮອດ 15 ຊັ້ນແລ້ວ ແລະຈະ ໄດ້ດຳເນີນການກໍ່ສ້າງຈົນກວ່າຈະສຳເລັດຕາມຄາດໝາຍ.
3. ການຈ່າຍເງິນອຸດໜູນ ອອກການໃຫ້ອາດີດພະນັກງານ ຂອງບໍລິສັດ ທີ່ຍັງເຫຼືອອີກຈຳນວນ 35% (4.353.909.464 ກີບ) ບໍລິສັດຄາດວ່າຈະຈ່າຍໃຫ້ສຳເລັດພາຍໃນເດືອນ 06/2025 ນີ້.
4. ທາງກຸ່ມບໍລິສັດ ໄດ້ສຳເລັດບົດວິພາກເສດຖະກິດ ເຂດສາທິດ ຢູ່ເມືອງວັງວຽງ ແຂວງວຽງຈັນ ໂດຍໄດ້ຜ່ານພະແນກແຜນການ ແລະການລົງທຶນແຂວງວຽງຈັນສຳເລັດແລ້ວ ແລະຄາດວ່າຈະໄດ້ ເຊັນສັນຍາກັບລັດຖະບານໄວໄວນີ້ ພ້ອມກັນນັ້ນຍັງກະກຽມບົດປະເມີນສິ່ງແວດລ້ອມ ໃຫ້ ຄຽງຄູ່ໄປພ້ອມໆກັນ.

ດັ່ງນັ້ນ, ຈຶ່ງລາຍງານມັງຍັງທ່ານເພື່ອຊາບ.

ຮຽນດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຜູ້ອຳນວຍການໃຫຍ່ ບໍລິສັດ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນ້ຍເຫຼ່ຍ